**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 25 ມິຖຸນາ 2023 (06-25-2023)**

---

## ມໍເດກາຍແລະເອສະເທີ

*ແມ່ນຫຍັງຄືບາງສິ່ງທີ່ທ່ານເຕັມໃຈທີ່ຈະເຮັດຊຶ່ງຄົນອື່ນອາດຄິດວ່າມັນເປັນການສ່ຽງ?*

**ຈຸດສຳຄັນໃນບົດຮຽນ:** ໜູນໃຈຄົນອື່ນໃຫ້ຕິດຕາມການຊົງນຳຂອງພຣະເຈົ້າເຖິງຈະມີຄ່າໃຊ້ຈ່າຍຫຼາຍປານໃດກໍຕາມ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຫຼາຍປີຜ່ານມາ, ຂ້າພະເຈົ້າແລະພັລຍາໄດ້ມີໂອກາດເດີນທາງໄປພັນທະກິຈທີ່ທະວີບອາຊີຕາເວັນອອກ(East Asia). ພວກເຮົາໄດ້ຖືກເຕືອນລ່ວງໜ້າໃຫ້ລະມັດລະວັງເຖິງການເວົ້າກ່ຽວກັບພຣະເຢຊູໃນທີ່ສາທາລະນະ. ການກ່າວເຖິງຫ້ອງໂຮງແຮມທີ່ອາດຈະຖືກອັດສຽງແລະຖືກສອດແນມເບິ່ງທຸກການເຄື່ອນໄຫວຂອງພວກເຮົາ. ນີ້ໃຫ້ຄວາມຮູ້ສຶກທີ່ໜ້າຢ້ານກົວຕໍ່ການຜະເຊີນໜ້າກັບຜູ້ຄົນຂອງພວກເຮົາ.

ເຊົ້າມື້ນຶ່ງຂ້າພະເຈົ້າໄດ້ຍ່າງຫຼິ້ນກັບພະນັກງານຂອງໂຮງຮຽນທີ່ພວກເຮົາສອນພາສາອັງກິດ. ໃນຂນະທີ່ພວກເຮົາຍ່າງໄປນັ້ນ, ໂດຍບໍ່ໄດ້ຕັ້ງໃຈ ລາວຫັນໜ້າມາຫາຂ້າພະເຈົ້າແລ້ວເວົ້າວ່າ: "ຂ້ອຍມີພຣະຄັມພີແລະໄດ້ອ່ານທຸກໆວັນ." ໃນຂນະທີ່ຂ້າພະເຈົ້າໄດ້ສອບຖາມເພີ້ມເຕີມ, ຊາຍຄົນນີ້ໄດ້ເປີດເຜີຍວ່າລາວເປັນ "ຄຣິສຕຽນລັບ" ຊຶ່ງບໍ່ເຄີຍໄດ້ບອກຜູ້ໃດກ່ຽວກັບຄວາມເຊື່ອຂອງລາວ. ໃນຂນະເວລາທີ່ລາວຢູ່ກັບຂ້າພະເຈົ້າ, ລາວມີຄວາມໜູນໃຈທີ່ຈະເວົ້າອອກມາກ່ຽວກັບຄວາມສັມພັນລະຫວ່າງລາວກັບພຣະຄຣິດ.

ພວກເຮົາບໍ່ຈຳເປັນຕ້ອງເດີນທາງໄປຍັງດິນແດນທີ່ຫ່າງໄກ ເພື່ອຈະຮູ້ວ່າໃນໂລກທີ່ເປັນສັດຕູກັນນີ້, ການເປັນຜູ້ຕິດຕາມຂອງພຣະເຢຊູຄຣິດຈະບໍ່ໄດ້ຖືກການຕ້ອນຮັບສເມີໄປ. **<u>ດ້ວຍເຫດນີ້, ມັນຈຶ່ງເປັນເຣື່ອງທີ່ສຳຄັນຢ່າງຍິ່ງທີ່ບັນດາຜູ້ທີ່ມີຄວາມເຊື່ອຈະຕ້ອງຊຸກຍູ້ໜູນໃຈເຊິ່ງກັນແລະກັນ ແລະຢືນຢູ່ຮ່ວມກັນເພື່ອພຣະຄຣິດ.</u>**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ເອສະເທີ 2:5-7</u>

*5ຍັງມີຊາວຢິວຄົນນຶ່ງໃນມະຫານະຄອນຊູຊາ ຊື່ ມໍເດກາຍ ລູກຊາຍ ຢາອີ ຜູ້ເປັນລູກຊາຍ ຊີເມອີ ຜູ້ເປັນລູກຊາຍ ກີເຊ ຄົນເບັນຢາ-*
*ມິນ 6ຜູ້ຖືກກວາດໄປຈາກເຢຣູຊາເລັມກັບພວກຊະເລີຍທີ່ຖືກກວາດໄປພ້ອມກັບ ເຢໂຮຢາກິນ ກະສັດຂອງຢູດາຜູ້ຊຶ່ງ ເນບູກາດເນັດຊາ*
*ກະສັດຂອງບາບີໂລນໄດ້ກວາດໄປນັ້ນ. 7ເພິ່ນໄດ້ລ້ຽງດູ ຮາດາສາ ຄືເອຊະເທີ ລູກສາວລຸງຂອງຕົນເພາະນາງບໍ່ມີພໍ່ແມ່ ຍິງສາວຄົນນີ້*
*ມີຮູບຮ່າງໜ້າຕາງາມ. ເມື່ອບິດາມານດາຂອງນາງເສັຽຊີວິດແລ້ວ ມໍເດກາຍ ກໍຮັບເອົານາງມາລ້ຽງເປັນລູກສາວ.*

ກ່ອນທີ່ພວກເຮົາຈະພິຈາລະນາເບິ່ງສອງບຸກຄົນທີ່ສຳຄັນໃນພຣະຄັມພີຊວ່ງນີ້, ຂໍໃຫ້ພວກເຮົາມາພິຈາລະນາເບິ່ງເຫດການທີ່ເກີດຂຶ້ນມາກ່ອນພວກເຂົາເຈົ້າ. ໃນບົດທີ່ 1, ຣາຊີນີ ວະຊະຕີ ຂັດຄຳສັ່ງຂອງກະສັດ ອາຮາຊູຣັສ (Ahasuerus) ຊຶ່ງໄດ້ສັ່ງໃຫ້ນາງແຫ່ຂະບວນຄວາມງາມຂອງນາງກ່ອນງານລ້ຽງເຫຼົ້າທີ່ກະສັດໄດ້ຈັດຂຶ້ນສຳລັບປະຊາຊົນ. ດ້ວຍເຫດນັ້ນ, ຣາຊີນີ ວະຊະຕີ ຈຶ່ງໄດ້ຖືກເນລະເທດອອກຈາກທີ່ປະທັບຂອງກະສັດ ອາຮາຊູຣັສ. ຫຼາຍປີຕໍ່ມາ, ກະສັດໄດ້ຊົງສົນພະທັຍໃນພະຣາຊີນີ ແລະໄດ້ຮັບຄຳແນະນຳຈາກສະພາຂອງພະອົງໃຫ້ຊອກຫາພະຣາຊີນີຄົນໃໝ່. ການປະກວດຄວາມງາມຂອງປະເພດຕ່າງໆໄດ້ຖືກຈັດຂຶ້ນ. ແມ່ຍິງໜຸ່ມສ່ວນຫຼາຍອາດຈະຖືກບັງຄັບໃຫ້ກາຍເປັນສ່ວນນຶ່ງຂອງຮາເລັມ(harem)ຂອງກະສັດ. ຈາກກຸ່ມນີ້, ກະສັດຈະເລືອກເອົາຣາຊີນີຂອງພະອົງ. ໃນບັນດາຜູ້ຍິງເຫຼົ່ານີ້ແມ່ນຍິງໜຸ່ມຊາວຢິວຜູ້ນຶ່ງ, ນາງເອສະເທີ (ຊື່ຊາວຢິວແມ່ນຮາດັສຊາ), ເຊິ່ງໃນທີ່ສຸດກໍໄດ້ຮັບການເລືອກຕັ້ງຈາກກະສັດໃຫ້ມາແທນພະຣາຊີນີ ວະຊະຕີ.

ຜູ້ຂຽນປຶ້ມຫົວນີ້ແນະນຳພວກເຮົາໃຫ້ຮູ້ຈັກກັບລູກພີ່ລູກນ້ອງ(cousin)ຂອງ ເອສະເທີ ຄື ມໍເດກາຍ ກ່ອນທີ່ຈະເວົ້າເຖິງເອສະເທີ. ມໍເດກາຍ ເປັນສ່ວນນຶ່ງຂອງຄອບຄົວທີ່ໄດ້ຖືກເນລະເທດຈາກເຢຣູຊາເລັມພາຍໃຕ້ການປົກຄອງຂອງກະສັດ ເນບູກາດເນັດຊາ ເມື່ອ-ຫຼາຍສິບປີກ່ອນໜ້ານັ້ນ. ມໍເດກາຍ ມາຈາກຕະກູນເບັນຢາມິນ, ເຊິ່ງເປັນຕະກູນຂອງຊາອູນ, ກະສັດອົງທຳອິດຂອງອິສຣາເອນ. ລາວເປັນຜູ້ປົກຄອງຂອງລູກພີ່ລູກນ້ອງຂອງລາວ, ເອສະເທີ, ເຊິ່ງພໍ່ແມ່ຂອງລາວໄດ້ເສັຽຊີວິດ. ລາວບໍ່ພຽງແຕ່ເປັນຜູ້ປົກຄອງຂອງເອສະເທີເທົ່ານັ້ນ, ແຕ່ລາວຍັງໄດ້ໃຫ້ຄຳປຶກສາແກ່ນາງໃນຊ່ວງວິກິຕການຄັ້ງໃຫຍ່ຫຼວງທີ່ຊາວຢິວໃນເປີເຊັຽຕ້ອງຜະເຊີນໜ້າ: <u>ນັ້ນຄືການຕໍ່ຕ້ານຊາວຢິວຕໍ່ປະຊາກອນຂອງພຣະເຈົ້າ</u>.

*ມີວິທີໃດແດ່ທີ່ສະມາຊິກໃນຄອບຄົວສາມາດໃຫ້ຄຳປຶກສາແນະນຳເຊິ່ງກັນແລະກັນຢ່າງມີປະສິດທິພາບ?*

ມໍເດກາຍ ເປັນຜູ້ຝຶກແອບນາງເອສະເທີ ໃນລະຫວ່າງເວລາຂອງການຂົ່ມເຫັງທີ່ອາດນຳໄປສູ່ຜົນສະທ້ອນເຖິງຕາຍ. ພັຍຂົ່ມຂູ່ດັ່ງກ່າວນັ້ນເກີດຂຶ້ນກັບຊາວຢິວຈາກເຈົ້າໜ້າທີ່ຣັຖບານຊື່ ຮາມານ, ຊຶ່ງຄວາມກຽດຊັງຕໍ່ ມໍເດກາຍ ແລະຊາວຢິວເກີດຂຶ້ນດ້ວຍເຫດວ່າເຊື້ອສາຍຂອງ ຮາມານ, ຄືຊາວອາມາເລັກ, ເປັນສັດຕູຂອງອິສຣາເອນໃນສມັຍໂບຮານ. ພຣະເຈົ້າໄດ້ຊົງໃຫ້ຄຳແນະນຳສະເພາະກັບຊາວອິສຣາເອນໃຫ້ທຳລາຍຊາວອາມາເລັກແລະລົບລ້າງຄວາມຊົງຈຳຂອງພວກເຂົາເຈົ້າຈາກໃຕ້ຟ້າສວັນ (ພະບັນຍັດສອງ 25). ເມື່ອເຮົາຖືກນຳເຂົ້າສູ່ການຮູ້ຈັກ ຮາມານ ຄັ້ງທຳອິດ, ລາວຖືກລະບຸວ່າເປັນ "ລູກຊາຍຂອງ ຮາມເມດາທາ ຊາວອາກັກ(ອສທ. 3:1), ໂດຍສະແດງວ່າລາວເປັນເຊື້ອສາຍຂອງອາກັກ. ດັ່ງນັ້ນ ຄວາມກຽດຊັງຂອງລາວຕໍ່ຊາວຢິວຈຶ່ງເລິກເຊິ່ງ(ຖ້ວມລົ້ນ). <u>ເມື່ອໜັງສືຂອງເອສະເທີໄດ້ເປີດເຜີຍ, ພວກເຮົາເຫັນວ່າ, ຜ່ານສະຕິປັນຍາແລະຄຳແນະນຳຂອງມໍເດກາຍ, ເອສະເທີ ສາມາດເອົາຊະນະຄວາມກຽດຊັງນັ້ນແລະຊ່ວຍຊີວິດຊາວຢິວໄດ້ດ້ວຍວິທີໃດ</u>.

## 2. <u>ເອສະເທີ 4:8-14</u>

*8 ມໍເດກາຍ ຍັງໄດ້ໃຫ້ໃບໜັງສືສຳເນົາທີ່ຂຽນອອກປະກາດໃນນະຄອນ ຊູຊາ ສັ່ງໃຫ້ທຳລາຍພວກເຂົານັ້ນ ເພື່ອນຳໄປສະແດງແກ່ພະນາງ ເອສະເທີ ແລະອະທິບາຍເຣື່ອງລາວໃຫ້ພະນາງ ທັງສັ່ງໃຫ້ພະນາງເຂົ້າເຝົ້າກະສັດເພື່ອອ້ອນວອນພະອົງໃຫ້ເຫັນແກ່ຊົນຊາດຂອງພະນາງ. 9 ຮາທາກ ກໍກັບໄປທູນພະນາງ ເອສະເທີ ເຖິງສິ່ງທີ່ ມໍເດກາຍ ໄດ້ບອກໄວ້. 10 ແລ້ວພະນາງ ເອສະເທີ ກໍບອກ ຮາທາກໃຫ້ສົ່ງຂ່າວໄປໃຫ້ ມໍເດກາຍ ວ່າ 11 "ຂ້າຣາຊການຂອງກະສັດທັງໝົດ ແລະປະຊາຊົນໃນບັນດາແຂວງຂອງກະສັດຮູ້ຢູ່ວ່າ "ຖ້າຊາຍຫຼືຍິງຄົນໃດເຂົ້າເຝົ້າກະສັດພາຍໃນພະລານຊັ້ນໃນໂດຍບໍ່ໄດ້ເອີ້ນນັ້ນມີກົດໝາຍຢູ່ຂໍ້ດຽວຊຶ່ງຄືກັນໝົດຄື: ລົງໂທດເຖິງຕາຍເວັ້ນໄວ້ແຕ່ຜູ້ຊຶ່ງກະສັດຍື່ນໄມ້ເທົ້າຄຳອອກຮັບຄົນນັ້ນຈຶ່ງຈະມີຊີວິດຢູ່ໄດ້ ສ່ວນຂ້ອຍ ກະສັດກໍບໍ່ໄດ້ກ່າວເອີ້ນໃຫ້ເຂົ້າເຝົ້າມາສາມສິບມື້ແລ້ວ." 12 ແລະພວກເຂົາກໍ ມາບອກ ມໍເດກາຍ ເຖິງສິ່ງທີ່ພະນາງ ເອສະເທີ ໄດ້ກ່າວນັ້ນ. 13 ມໍເດກາຍ ຈຶ່ງບອກພວກເຂົາໃຫ້ກັບໄປທູນຕອບພະນາງເອສະເທີວ່າ "ຢ່າຊູ່ຄິດວ່ານາງຢູ່ໃນຣາຊວັງຈະລອດພົ້ນໄດ້ດີກວ່າພວກຢິວທັງປວງ 14 ເພາະຖ້ານາງງຽບຢູ່ໃນເວລານີ້ຄວາມຊ່ວຍເຫຼືອແລະການຊ່ວຍໃຫ້ພົ້ນຈະມາເຖິງພວກຢິວຈາກບ່ອນອື່ນ. ແຕ່ນາງ ແລະເຊື້ອສາຍພໍ່ຂອງນາງຈະຈິບຫາຍ, ທີ່ຈິງນາງມາຮັບຕຳແໜ່ງຣາຊີນີກໍເພື່ອຍາມຫຍຸ້ງຍາກເຊັ່ນນີ້ອາດຈະເປັນໄປໄດ້ໃຜຈະຮູ້"*

ຄວາມກຽດຊັງຂອງ ຮາມານ ທີ່ມີຕໍ່ ມໍເດກາຍ ແລະຊົນຊາດຢິວໄດ້ມາເຖິງຈຸດສຸດຍອດໃນພຣະຄັມພີ ເອສະເທີ ບົດທີ່ 3. ເຖິງແມ່ນວ່າປະຊາຊົນໄດ້ຖືກສັ່ງໃຫ້ກົ້ມກາບ ຮາມານ, ມໍເດກາຍປະຕິເສດທີ່ຈະເຮັດ. ດ້ວຍເຫດວ່າ ມໍເດກາຍ ເປັນຄົນຢິວ, ຮາມານ ໄດ້ຖືວ່ານີ້ເປັນໂອກາດດີທີ່ຈະຂ້າບໍ່ພຽງແຕ່ ມໍເດກາຍ ເທົ່ານັ້ນ, ແຕ່ຮວມເຖິງຄົນຢິວທັງໝົດ. ຮາມານໄດ້ຊັກຊວນໃຫ້ກະສັດອອກຄຳສັ່ງປະກາດລະດູການ "ລ່າສັດຢ່າງເປີດເຜີຍ" ຕໍ່ຊາວຢິວໃນວັນທີ່ກຳນົດໄວ້ໃນປີທີ່ຈະມາເຖິງ.

ມາເຖິງຈຸດນີ້, ມໍເດກາຍ ໄດ້ຮຽກຮ້ອງພະຣາຊີນີ ເອສະເທີ ໃຫ້ຊົງດຳເນີນການເພື່ອຊ່ວຍຮັກສາຊີວິດຂອງປະຊາຊົນຂອງພະນາງ. ເພື່ອເຕືອນພະນາງໃຫ້ຮູ້ເຖິງແຜນການຂອງ ຮາມານ, ມໍເດກາຍ ໄດ້ຮັບສຳເນົາຂອງຣັຖດຳລັດ ແລະໄດ້ມອບໃຫ້ພະຣາຊີນີ ເອສະເທີ

ພ້ອມກັບຄຳແນະນຳໃຫ້ພະນາງຊົງເຂົ້າໄປເຝົ້າກະສັດ ແລະອ້ອນວອນໃຫ້ພະອົງປະຖິ້ມຣັຖບັນຍັດ(ຄຳສັ່ງ)ສະບັບນີ້. ເຖິງແມ່ນວ່າຢູ່ໃນສະພາບທີ່ເບິ່ງຄືວ່າເປັນໄປບໍ່ໄດ້, ມໍເດກາຍ ໄດ້ຮຽກຮ້ອງໃຫ້ພະຣາຊີນີ ເອສະເທີ ຊົງກະທຳທຸກສິ່ງທີ່ພະນາງສາມາດຊົງກະທຳໄດ້. ຄຳຕອບຂອງລາວຕໍ່ພະນາງແມ່ນການຢືນຢັນວ່າ ພຣະເຈົ້າໄດ້ຊົງວາງພະນາງໄວ້ໃນຕຳແໜ່ງພະຣາຊີນີໃນເວລານີ້. ພະນາງຕ້ອງຊົງກະທຳສິ່ງທີ່ຖືກຕ້ອງ ຫຼືຕ້ອງຕາຍກັບປະຊາຊົນຂອງພະນາງ. ສວັດດີການຂອງພວກເຂົາເຈົ້າ(ປະຊາຊົນ), ແລະຂອງພະນາງເອງ, ຢູ່ໃນມືຂອງພະນາງ.

ການທ້າທາຍຜູ້ທີ່ພວກເຮົາໃຫ້ຄຳປຶກສາແນະນຳແມ່ນສ່ວນສຳຄັນທີ່ຈະຊ່ວຍໃຫ້ພວກເຂົາເຈົ້າເຕີບໃຫຍ່. ພວກເຂົາເຈົ້າຕ້ອງຖືກທ້າທາຍໃຫ້ເຮັດສິ່ງທີ່ຖືກຕ້ອງ ໂດຍບໍ່ຄຶດເຖິງຜົນທີ່ຕາມມາ. ພວກເຮົາອາສັຍຢູ່ໃນສັງຄົມທີ່ຄົນມັກເລືອກທາງທີ່ງ່າຍ. **ແຕ່ວິທີທີ່ງ່າຍບໍ່ແມ່ນວິທີທີ່ຖືກຕ້ອງສເມີໄປ.** ບັນດາຜູ້ທີ່ພວກເຮົາຝຶກແອບເພື່ອການເຕີບໃຫຍ່ ຈຳເປັນຕ້ອງໄດ້ຖືກນຳພາໄປສູ່ຄວາມເຂົ້າໃຈວ່າພວກເຂົາເຈົ້າ**ຕ້ອງ**ເລືອກເອົາສິ່ງທີ່ຖືກຕ້ອງເໜືອສິ່ງທີ່ເໝາະສົມ(ສິ່ງທີ່ສົມຄວນ)ສເມີໄປ. ໃນຍຸກສມັຍປະຈຸບັນທີ່ມີ ແຮງກົດດັນຫຼາຍເພີ້ມຂຶ້ນໃນການປະຖິ້ມຄວາມເຊື່ອຂອງຊາວຄຣິສະຕຽນຂອງພວກເຮົາ, ຈຶ່ງນຳພາຜູ້ເຊື່ອອື່ນໆໃຫ້ຮັບຮູ້ວ່າພຣະເຈົ້າຊົງມີພຣະປະສົງສະເພາະສຳລັບພວກເຮົາແຕ່ລະຄົນ. **ພຣະເຈົ້າໄດ້ຊົງວາງແສງສວ່າງແຫ່ງຄວາມເຊື່ອຂອງພວກເຮົາໃນໂລກນີ້ "ສຳລັບຊ່ວງເວລາດັ່ງກ່າວນີ້."**

*ແມ່ນອຸປສັກຫຍັງແດ່ທີ່ສາມາດມາກີດຂວາງພວກເຮົາໃນການເຮັດໃນສິ່ງທີ່ຖືກຕ້ອງ?*

## 3. ເອສະເທີ 4:15-17

[15]*ແລ້ວ ເອສະເທີ ກ່າວບອກເຂົາໃຫ້ໄປບອກ ມໍເດກາຍວ່າ* [16]*"ໄປສາໃຫ້ຮວບຮວມພວກຢິວທັງໝົດທີ່ຊອກພົບໃນນະຄອນ ຊູຊາແລະ-*
*ຖືສິນອົດອາຫານເພື່ອຂ້ອຍ. ຢ່າຊູ່ກິນຢ່າຊູ່ດື່ມໃນລະຫວ່າງສາມມື້, ທັງກາງຄືນ ຫລືກາງເວັນຂ້ອຍແລະສາວໃຊ້ຂອງຂ້ອຍກໍຈະອົດ-*
*ອາຫານເໝືອນກັບພວກທ່ານດ້ວຍ. ຫຼັງຈາກນັ້ນ, ຂ້ອຍຈະເຂົ້າເຝົ້າກະສັດ ເຖິງແມ່ນວ່າເປັນການຝ່າຝືນກົດໝາຍ. ຖ້າຂ້ອຍຈິບຫາຍ-*
*ຂ້ອຍກໍຈິບຫາຍ"* [17]*ດັ່ງນັ້ນ, ມໍເດກາຍ ກໍໄປເຮັດທຸກຢ່າງຕາມທີ່ພະນາງ ເອສະເທີ ສັ່ງແກ່ຕົນ.*

ການອະທິຖານບໍ່ໄດ້ກ່າວເຖິງຢູ່ໃນຂໍ້ພຣະຄຳພີເຫຼົ່ານີ້, ແຕ່ຕລອດເວລາໃນພຣະຄັມພີ ການຖືສິນອົດອາຫານ ແມ່ນເຊື່ອມຕໍ່ກັບການອະທິຖານສເມີ. ການຖືສິນອົດອາຫານ, ແນ່ນອນ, ເປັນການຍຶດເວລາຂອງການລະເວັ້ນຈາກການກິນອາຫານເພື່ອຈົດຈໍ່ໃຈໃສ່ພຣະເຈົ້າໃນການສແວງຫາການຊົງສະຖິດຢູ່ນຳ, ພຣະອຳນາດ, ແລະຄຳຕອບຂອງພຣະອົງ. ການຖືສິນອົດອາຫານແມ່ນໄດ້ຖືກເວົ້າເຖິງເປັນຄັ້ງແລກຢູ່ໃນພຣະຄັມພີເອສະເທີ ບົດທີ່ 4 ຂໍ້ 3, ໃນຂນະທີ່ປະຊາຊົນຊາວຢິວຕອບສນອງຕໍ່ຂ່າວຮ້າຍກ່ຽວ ກັບພະຣາຊດຳລັດຂອງກະສັດໃນການທຳລາຍລ້າງປະຊາຊົນຊາວຢິວ. ບັດນີ້ໃນຂໍ້ທີ 15-16, ເອສະເທີ ໄດ້ຂໍໃຫ້ ມໍເດກາຍ ແລະຊາວຢິວມີສ່ວນຮ່ວມໃນລະຍະເວລາຂອງການຖືສິນອົດອາຫານທີ່ຍາວນານ ແລະ ໂດຍການຮ່ວມມືໃນການອະທິຖານ. ຈຸດປະສົງແມ່ນເພື່ອສແວງຫາຄວາມໂປດປານຂອງພຣະເຈົ້າສຳລັບພະຣາຊີນີ ເອສະເທີ ໃນຂນະທີ່ພະນາງເຂົ້າເຝົ້າກະສັດ.

*ເມື່ອໃດທີ່ພຣະເຈົ້າໄດ້ຊົງຕອບຄຳອະທິຖານຂອງທ່ານໃນນາມຜູ້ອື່ນ?*

ພະຣາຊີນີ ເອສະເທີ ໄດ້ຮັບຮູ້ວ່າພະນາງໄດ້ລະເມີດລະບຽບການໂດຍການເຂົ້າເຝົ້າພະຣາຊາໂດຍບໍ່ໄດ້ຮັບການຮຽກເອີ້ນ. ກະສັດອາຣາຊູເອຣັສ ໄດ້ຊົງສະແດງໃຫ້ເຫັນແລ້ວວ່າພະອົງສາມາດປ່ຽນແປງໄດ້ງ່າຍພຽງໃດຕໍ່ຜູ້ຍິງ. ນອກຈາກນັ້ນ, ທີ່ປຶກສາຂອງກະສັດມັກຈະເຮັດທຸກວິຖີທາງທີ່ພວກເຂົາເຈົ້າສາມາດເຮັດໄດ້ເພື່ອສະແດງຄວາມຍິນດີຕໍ່ກະສັດແລະນາຍົກຣັຖມົນຕຣີຂອງເພິ່ນຄື ຮາມານ. ສະຖານະການທັງໝົດແມ່ນການຕໍ່ຕ້ານ ເອສະເທີ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ຊົງສາມາດປ່ຽນແປງສະຖານະການໄດ້. ດັ່ງນັ້ນ, ການອະທິຖານຢ່າງແຮງກ້າ ແລະ ການອົດອາຫານຢ່າງຈິງຈັງໃນເຣື່ອງນີ້ຈຶ່ງເປັນສິ່ງຈຳເປັນ.

ຫຼັງຈາກການຮ້ອງຂໍການອະທິຖານແລະການຖືສິນອົດອາຫານ, ພະຣາຊີນີ ເອສະເທີ ໄດ້ຊົງປະກາດວ່າ, **"ຖ້າວ່າຂ້ອຍຈິບຫາຍ, ຂ້ອຍກໍຈະຈິບຫາຍໄປ."** ດ້ວຍຖ້ອຍຄຳເຫຼົ່ານີ້, ພະນາງໄດ້ສະແດງຄວາມໄວ້ວາງໃຈຢ່າງແທ້ຈິງໃນພຣະເຈົ້າ. "ຂ້ອຍຈະເຮັດຕາມພຣະ

ປະສົງຂອງອົງພຣະເຈົ້າ, ບໍ່ວ່າຄ່າໃຊ້ຈ່າຍຈະໜ້ອຍຫຼືຫຼາຍປານໃດກໍຕາມ!" ນີ້ແມ່ນຄຳເວົ້າຂອງການຍອມຈຳນົນຕໍ່ພຣະປະສົງຂອງອົງພຣະເຈົ້າ ແລະແມ່ນຄຳເວົ້າຂອງຄວາມໝັ້ນໃຈໃນພຣະເຈົ້າ. ໃນຂະນະທີ່ພວກເຮົາປະເຊີນກັບມື້ທີ່ບໍ່ແນ່ນອນ, ນັ້ນກໍຕ້ອງເປັນທັສນະຄະຕິຂອງພວກເຮົາເຊັ່ນກັນ. ພວກເຮົາຕ້ອງຢືນຂຶ້ນຍຶດໝັ້ນ ເພື່ອສິ່ງທີ່ຖືກຕ້ອງ, ໂດຍບໍ່ຄຶດເຖິງຄ່າໃຊ້ຈ່າຍສ່ວນບຸກຄົນ. ຈົ່ງຖ່າຍທອດທັສນະຄະຕິນີ້ໃຫ້ກັບຜູ້ທີ່ທ່ານກຳລັງໃຫ້ຄຳປຶກສາແນະນຳ. **ຊ່ວຍ**ພວກເຂົາເຈົ້າໃຫ້ເຫັນວ່າຄວາມໄວ້ວາງໃຈຢ່າງແທ້ຈິງໃນພຣະເຈົ້າເປັນສິ່ງຈຳເປັນໃນໂລກທຸກມື້ນີ້. **ເປັນແບບຢ່າງ**ສຳລັບພວກເຂົາເຈົ້າທີ່ຕ້ອງການໃຫ້ບັນດາຜູ້ເຊື່ອຢືນຢູ່ຮ່ວມກັນເພື່ອພຣະເຈົ້າໃນໂລກປະຈຸບັນຂອງພວກເຮົາ. **ຕັກເຕືອນ**ພວກເຂົາເຈົ້າວ່າພວກເຮົາມີຄວາມເຂັ້ມແຂງຫຼາຍຂຶ້ນດ້ວຍກັນໃນຖານະທີ່ເປັນຜູ້ຕິດຕາມພຣະເຢຊູຄຣິດ. ໂລກຂອງພວກເຮົາຕ້ອງການບຸກຄົນດັ່ງ "**ເອສະເທີ**" ແລະ "**ມໍເດກາຍ**" ຫຼາຍເພີ້ມຂຶ້ນເພື່ອຢືນຢັດສຳລັບສິ່ງທີ່ ຖືກຕ້ອງ ແລະ ເປັນຄວາມຈິງ. **ຂໍໃຫ້ພາລະກິຈຂອງທ່ານໃນຖານະເປັນຜູ້ໃຫ້ຄຳປຶກສາຜະລິດຜົນ ບັນດາຄົນປະເພດນີ້ສຳລັບພຣະຣາຊອານາຈັກຂອງພຣະເຈົ້າ! ອາແມນ!**

*ພວກເຮົາສາມາດຮຽນຮູ້ຫຍັງຈາກຄວາມສັມພັນລະຫວ່າງ ມໍດີກາຍ ແລະເອສະເທີ?*

## ນຳໃຊ້ໃນຊີວິດ

ພວກເຮົາສົມຄວນໜູນໃຈຄົນອື່ນໃຫ້ຕິດຕາມການຊົງນຳຂອງພຣະເຈົ້າ-ເຖິງຈະມີຄ່າໃຊ້ຈ່າຍຫຼາຍປານໃດກໍຕາມ. ຈົ່ງໃຊ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງປະເມີນຜົນ.** ຈົ່ງໃຊ້ເວລາໃນອາທິດນີ້ປະເມີນຜົນວ່າທ່ານໄດ້ຈັດຕຽມດີປານໃດທີ່ຈະຜະເຊີນໜ້າກັບສັດຕູຕໍ່ຄວາມເຊື່ອຂອງທ່ານໃນອົງພຣະຄຣິດ. ທ່ານຈຳເປັນຕ້ອງເຮັດຫຍັງເພື່ອໃຫ້ພລັງໃນການແກ້ບັນຫາຂອງທ່ານ? ຈົ່ງກຳໜົດເປົ້າໝາຍລະຍະສັ້ນຫຼາຍໆຂໍ້ເພື່ອການເຕີບໃຫຍ່ດ້ານຈິດວິນຍານ.
- **ຈົ່ງອະທິຖານແລະອົດອາຫານ.** ຈົ່ງເລືອກມື້ນຶ່ງໃນອະນາຄົດອັນໃກ້ນີ້ສຳລັບການອະທິຖານລະຍະຍາວ ແລະການອົດອາຫານເພື່ອທັງສອງຄື: ນຶ່ງບຸກຄົນທີ່ທ່ານກຳລັງໃຫ້ຄຳປຶກສາ ແລະສອງການຕໍ່ອາຍຸທາງຈິດວິນຍານທີ່ປະເທດຂອງພວກເຮົາຕ້ອງການ.
- **ຈົ່ງມີຄວາມຮັບຜິດຊອບ.** ຈົ່ງວາງແຜນທີ່ຈະພົບປະກັບຜູ້ເຊື່ອຄົນອື່ນໆແຕ່ລະອາທິດເພື່ອການອະທິຖານ ແລະເພື່ອກວດກາຄວາມຮັບຜິດຊອບຂອງກັນແລະກັນໃນການດຳເນີນຊີວິດກັບອົງພຣະຄຣິດ. ນີ້ອາດຈະແມ່ນຜູ້ທີ່ທ່ານກຳລັງໃຫ້ຄຳປຶກສາຫຼືຄົນອື່ນໆທີ່ມີຄວາມເຊື່ອທີ່ເຂັ້ມແຂງ. ຈະເປັນການດີກວ່າຖ້າຫາກພວກເຮົາເຮັດນຳກັນ.

ບໍ່ວ່າພວກເຮົາຈະເດີນທາງໄປເຜີຍແຜ່ຢູ່ຕ່າງປະເທດ ຫຼື ປະເຊີນກັບຄວາມກົດດັນທາງສັງຄົມໃນປະເທດຂອງພວກເຮົາກໍດີ, ຄວາມເຊື່ອຂອງພວກເຮົາຈະຖືກທ້າທາຍ. ແລະພວກເຮົາມີຄວາມຮັບຜິດຊອບໃນການກະກຽມຜູ້ທີ່ພວກເຮົາໃຫ້ຄຳປຶກສາແນະນຳສຳລັບໂອກາດດັ່ງກ່າວເຊັ່ນດຽວກັນ. **ພະຣາຊິນີ ເອສະເທີ ເປັນຕົວຢ່າງທີ່ຍິ່ງໃຫຍ່ຂອງວິທີການຢືນຢູ່ຢ່າງໝັ້ນຄົງສຳລັບພຣະເຈົ້າໃນກໍລະນີນີ້.**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ https://ulsb.org/sunday-school-2/ ແປໂດຍ SSK**